**UNIVERSITY OF CALIFORNIA, SAN FRANCISCO**

# ຂໍ້ກຳນົດສິດ

# ຂອງຜູ້ເຂົ້າຮ່ວມການທົດລອງ

ສິດຢູ່ລຸ່ມນີ້ແມ່ນສິດຂອງທຸກໆຄົນຜູ້ທີ່ຖືກບອກໃຫ້ຢູ່ໃນການສຶກສາຄົ້ນຄວ້າ. ໃນຖານະເປັນຜູ້ເຂົ້າຮ່ວມໃນການທົດລອງ, ທ່ານມີສິດດັ່ງຕໍ່ໄປນີ້:

1) ໄດ້ຮັບແຈ້ງບອກສິ່ງທີ່ການສຶກສາກຳລັງພະຍາຍາມຊອກຫາ,
2) ໄດ້ຮັບແຈ້ງບອກສິ່ງທີ່ຈະເກີດຂຶ້ນກັບທ່ານ ແລະ ຂັ້ນຕອນດຳເນີນການ, ຢາ ຫຼື ອຸປະກອນໃດໜຶ່ງແຕກຕ່າງຈາກສິ່ງທີ່ຈະຖືກນຳໃຊ້ຢູ່ໃນການປະຕິບັດທີ່ເປັນມາດຕະຖານ ຫຼື ບໍ່,
3) ໄດ້ຮັບແຈ້ງບອກກ່ຽວກັບຄວາມສ່ຽງ, ຜົນຂ້າງຄຽງ ຫຼື ຄວາມອຶດອັດຂອງສິ່ງຕ່າງໆທີ່ມີເລື້ອຍໆ ແລະ/ຫຼື ສຳຄັນທີ່ຈະເກີດຂຶ້ນກັບທ່ານສຳລັບຈຸດປະສົງການຄົ້ນຄວ້າ,
4) ໄດ້ຮັບແຈ້ງບອກວ່າທ່ານສາມາດຄາດຫວັງຜົນປະໂຫຍດໃດໜຶ່ງຈາກການເຂົ້າຮ່ວມບໍ່ ແລະ ຖ້າເປັນແນວນັ້ນ, ອາດຈະເປັນຜົນປະໂຫຍດອັນໃດ,
5) ໄດ້ຮັບແຈ້ງບອກຕົວເລືອກອື່ນທີ່ທ່ານມີ ແລະ ພວກມັນຈະດີຂຶ້ນ ຫຼື ຂີ້ຮ້າຍລົງກວ່າການເຂົ້າຮ່ວມໃນການສຶກສາແນວໃດ,
6) ໄດ້ຮັບອະນຸຍາດໃຫ້ຖາມຄຳຖາມກ່ຽວຂ້ອງກັບການສຶກສາທັງກ່ອນເຫັນດີເຂົ້າຮ່ວມ ແລະ ໃນລະຫວ່າງໄລຍະເວລາຂອງການສຶກສາ,
7) ໄດ້ຮັບແຈ້ງບອກວ່າມີການປິ່ນປົວປະເພດໃດຢູ່, ຖ້າຫາກເກີດມີອາການສົນໃດໜຶ່ງຂຶ້ນ,
8) ປະຕິເສດທີ່ຈະເຂົ້າຮ່ວມທັງໝົດ ຫຼື ປ່ຽນໃຈກ່ຽວກັບການເຂົ້າຮ່ວມຫຼັງຈາກການສຶກສາເລີ່ມຕົ້ນ. ການຕັດສິນໃຈນີ້ຈະບໍ່ມີຜົນກະທົບຕໍ່ກັບສິດຂອງທ່ານເພື່ອຈະຮັບການເບິ່ງແຍງດູແລທີ່ທ່ານຈະໄດ້ຮັບ, ຖ້າທ່ານບໍ່ຢູ່ໃນການສຶກສາ,
9) ຮັບເອົາສຳເນົາຂອງແບບຟອມຄຳຍິນຍອມທີ່ລົງລາຍເຊັນ ແລະ ໃສ່ວັນທີແລ້ວ,
10) ບໍ່ໃຫ້ມີຄວາມກົດດັນເມື່ອພິຈາລະນາວ່າທ່ານຈະເຫັນດີຢູ່ໃນການສຶກສາ ຫຼື ບໍ່.

ທ່ານໝໍສຶກສາຂອງທ່ານຈະບອກທ່ານວ່າການສຶກສາຄົ້ນຄວ້າຖືກຄຸ້ມຄອງໂດຍອົງການອາຫານ ແລະ ຢາ (Food and Drug Administration, FDA) ຫຼື ບໍ່. ຖ້າການສຶກສານີ້ຖືກຄຸ້ມຄອງໂດຍ FDA, ພາຍໃຕ້ກົດໝາຍອາຫານ, ຢາ ແລະ ເຄື່ອງສຳອາງຂອງລັດຖະບານກາງ (Federal Food, Drug, and Cosmetic Act, FD&C Act), FDA ອາດຈະກວດກາ ແລະ ອັດສຳເນົາທຸກບັນທຶກກ່ຽວຂ້ອງກັບການມີສ່ວນຮ່ວມຂອງທ່ານຢູ່ໃນການສຶກສາ.

---

ຖ້າທ່ານມີຄຳຖາມອື່ນ, ທ່ານຄວນຈະຖາມຜູ້ຄົ້ນຄວ້າ ຫຼື ຜູ້ຊ່ວຍຜູ້ຄົ້ນຄວ້າ. ນອກຈາກນັ້ນ, ທ່ານອາດຈະຕິດຕໍ່ຫາຄະນະກຳມະການທົບທວນທາງດ້ານສະຖາບັນ (Institutional Review Board, IRB), ເຊິ່ງກ່ຽວຂ້ອງກັບການປົກປ້ອງຜູ້ເຂົ້າຮ່ວມໃນການໂຄງການຄົ້ນຄວ້າ. ທ່ານອາດຈະເຂົ້າເຖິງຫ້ອງການ IRB ໄດ້ໂດຍການໂທຫາເບີ: (415) 476-1814 ຕັ້ງແຕ່ 8:00 ໂມງເຊົ້າ ຫາ 5:00 ໂມງແລງ, ວັນຈັນ ຫາ ວັນສຸກ ຫຼື ໂດຍການຂຽນຫັງສື

ຫາ UCSF Human Research Protection Program, Box 1288, 490 Illinois Street, Floor 6, San Francisco, CA 94143 ຫຼື ໂດຍທາງອີເມວໄປທີ່ irb@ucsf.edu.

ໂທ (415) 476-1814 ຫຼື ອີເມວຫາ irb@ucsf.edu ສໍາລັບຂໍ້ມູນກ່ຽວກັບການແປພາສາ.